**ມິຊຊາອາທິດທີ 4 ກຳນົດບຳເພັນສິນ**

**ວັນທີ 19 ມີນາ 2023**



**ພຣະວໍລະສານໂດຍນັກບຸນຢວງ 9,1,6-9,13-17,34-38 (ແບບສັ້ນ)**

ໃນເວລານັ້ນ, ເມື່ອເວລາຊົງພຣະດຳເນີນໄປ, ພຣະເຢຊູເຈົ້າຊົງທອດພຣະເນດເຫັນຄົນຕາບອດແຕ່ເກີດຜູ້ໜຶ່ງ. ພຣະອົງກໍຖົ່ມນ້ຳລາຍລົງພື້ນດິນ, ກອຍເປັນຕົມ ແລ້ວເອົາມາທາຕາຂອງຄົນຕາບອດພ້ອມທັງສັ່ງວ່າ: ຈົ່ງໄປລ້າງຢູ່ສະຊີໂລເອ ຊຶ່ງແປວ່າ: ຖືກສົ່ງມາ. ຄົນຕາບອດນັ້ນກໍໄດ້ໄປລ້າງແລະຫລິບມາເຫັນຮຸ່ງ. ພວກຄົນໃກ້ຄຽງແລະຜູ້ທີ່ເຄີຍເຫັນເຂົາເປັນຄົນຂໍທານແຕ່ກ່ອນເວົ້າກັນວ່າ: ບໍ່ແມ່ນຄົນນີ້ບໍເຄີຍນັ່ງຂໍທານແຕ່ກ່ອນ? ມີລາງຄົນເວົ້າວ່າແມ່ນລາວນັ້ນແລ້ວ. ລາງຄົນວ່າ: ບໍ່ແມ່ນ, ແມ່ນຄົນຄືຄົນ. ແຕ່ຄົນຕາບອດນັ້ນເວົ້າວ່າ: ແມ່ນເຮົາເອງ. ເຂົາຈຶ່ງພາຄົນຕາບອດແຕ່ກ່ອນໄປຫາພວກຟາຣີເຊວ. ມື້ທີ່ພຣະເຢຊູເຈົ້າຊົງກອຍຕົມແລະທຳໃຫ້ເຂົາເຫັນຮຸ່ງນັ້ນແມ່ນວັນເສົາ. ພວກຟາຣີເຊວຈຶ່ງຖາມຄົນນັ້ນວ່າ: ແນວໃດເຈົ້າຈຶ່ງເຫັນຮຸ່ງ. ເຂົາຕອບວ່າ: ເພິ່ນໄດ້ເອົາຂີ້ຕົມທາຕາຂ້ານ້ອຍ, ຂ້ານ້ອຍໄປລ້າງແລະແນມເຫັນຮຸ່ງ. ຟາຣີເຊວລາງຄົນເວົ້າວ່າ: ຄົນຜູ້ນີ້ບໍ່ໄດ້ມາຈາກພຣະເຈົ້າ, ຍ້ອນເຂົາບໍ່ນັບຖືວັນເສົາ. ລາງຄົນກໍເວົ້າຄັດຄ້ານວ່າ: ຄົນບາບຈະທຳການອັດສະຈັນແບບນີ້ໄດ້ຢ່າງໃດ, ແລ້ວພວກເຂົາກໍເກີດແຕກແຍກກັນ. ພວກເຂົາຍັງຖາມຄົນຕາບອດອີກວ່າ: ເຈົ້າວ່າ ຄົນທີ່ໄດ້ທຳໃຫ້ເຈົ້າເຫັນຮຸ່ງນັ້ນແມ່ນຄົນແນວໃດ? ເຂົາຕອບວ່າ: ແມ່ນປະພາສົກ.

ພວກຟາຣີເຊວຕອບວ່າ: ມຶງເກີດມາມີບາບເຕັມໂຕແລ້ວ ຍັງຈະບັງອາດມາສັ່ງສອນພວກເຮົາບໍ? ແລ້ວພວກນີ້ກໍໄລ່ຄົນດີບອດນັ້ນອອກໜີ. ພຣະເຢຊູເຈົ້າຊາບຂ່າວວ່າ: ຄົນດີບອດຖືກໄລ່ໜີ. ເມື່ອພຣະອົງພົບເຂົາຈຶ່ງກ່າວວ່າ: ເຈົ້າເຊື່ອເຖິງບຸດມະນຸດບໍ? ເຂົາທູນວ່າ: ພຣະອົງເຈົ້າເອີຍ, ບຸດມະນຸດນັ້ນແມ່ນຜູ້ໃດ, ຂ້ານ້ອຍຢາກເຊື່ອເຖິງພຣະອົງ? ພຣະເຢຊູເຈົ້າຕອບວ່າ: ເຈົ້າກໍເຫັນເພິ່ນແລ້ວ, ແມ່ນຜູ້ເວົ້າກັບເຈົ້າຢູ່ດຽວນີ້ເອງ. ເຂົາຈຶ່ງທູນວ່າ: ໂອພຣະອົງເຈົ້າ, ຂ້າພະເຈົ້າຍອມເຊື່ອ. ແລ້ວເຂົາກໍຂາບລົງນຳມັດສະການພຣະອົງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ຊ່ວງເວລາສີ່ສິບວັນແຫ່ງກຳນົດບຳເພັນສິນນີ້ ບໍ່ພຽງແຕ່ເປັນເວລາທີ່ພວກເຮົາເຂົ້າໄປໃນທີ່ປ່ຽວພ້ອມກັບພຣະເຢຊູເຈົ້າພາຍໃຕ້ການນຳພາຂອງພຣະຈິດ ເພື່ອຈຳສິນພາວະນາພ້ອມກັບພຣະອົງຜ່ານທາງຄຳພາວະນາເທົ່ານັ້ນ. ແຕ່ກຳນົດບຳເພັນສິນຍັງເປັນໂອກາດອັນເໝາະສົມ, ເປັນເວລາແຫ່ງການເດີນທາງຂອງພວກເຮົາພ້ອມກັບພຣະເຢຊູເຈົ້າເພື່ອມຸ່ງສູ່ນະຄອນເຢລູຊາແລມອັນແມ່ນສະຖານທີ່ຊຶ່ງພຣະອົງຈະຕ້ອງຖືກທໍລະມານ, ຕາຍ ແລະກັບເປັນຄືນມາອີກດ້ວຍ. ບົນເສັ້ນທາງນີ້ເອງທີ່ພຣະເຢຊູເຈົ້າໄຂສຳແດງຕົວຂອງພຣະອົງແລະພາລະກິດທີ່ພຣະອົງໄດ້ຮັບຈາກພຣະບິດາເຈົ້າໃຫ້ພວກເຮົາຮູ້ຈັກ.

ວັນອາທິດທີທີ່ຜ່ານມາ, ພຣະເຢຊູເຈົ້າໄດ້ໄຂສຳແດງຕົວຂອງພຣະອົງໃຫ້ຍິງສາວຊາມາຣີ, ຄົນຕ່າງສາດສະໜາຮູ້ວ່າ: ພຣະອົງແມ່ນພຣະກຣິສໂຕ, ພຣະເມດຊີອາຜູ້ໄດ້ມາໃນໂລກນີ້.

ສ່ວນວັນອາທິດນີ້, ພຣະເຢຊູເຈົ້າກໍສືບຕໍ່ໄຂສຳແດງ, ເທື່ອນີ້ແມ່ນໃຫ້ຄົນຕາບອດ ຄົນຢູ່ຊາຍຂອບສັງຄົມ, ຄົນທີ່ຖືກປະນາມວ່າເປັນຄົນບາບ. ພຣະເຢຊູເຈົ້າບໍ່ພຽງແຕ່ເປີດຕາເຂົາໃຫ້ເຫັນແສງສະວ່າງເທົ່ານັ້ນ, ແຕ່ພຣະອົງຍັງເປີດສະຕິປັນຍາ, ເປີດໃຈເຂົາໃຫ້ເຫັນແລະເຊື່ອເຖິງຕົວຂອງພຣະອົງຜູ້ເປັນ “ພຣະບຸດຂອງພຣະເຈົ້າ”ດ້ວຍ. ແລະຄົນດີບອດນີ້ກໍໄດ້ເປີດໃຈໃຫ້ພຣະເຢຊູເຈົ້າດ້ວຍການປະກາດຢືນຢັນຄວາມເຊື່ອຂອງເຂົາວ່າ: “ໂອພຣະອົງເຈົ້າ, ຂ້າພະເຈົ້າເຊື່ອ”.

ສຳລັບພວກເຮົາຜູ້ໄດ້ເດີນທາງຮ່ວມກັບພຣະເຢຊູເຈົ້າຕັ້ງແຕ່ຕົ້ນກຳນົດບຳເພັນສິນຈົນເຖິງວັນນີ້, ພວກເຮົາໄດ້ຮູ້ຈັກຫຍັງແດ່ເຖິງຕົວຂອງພຣະອົງ? ຫລືພວກເຮົາເປັນເໝືອນລູກສິດຂອງພຣະເຢຊູເຈົ້າທີ່ຟັງພຣະອົງແຕ່ບໍ່ເຂົ້າໃຈ, ເຫັນພາລະກິດຂອງພຣະອົງແຕ່ດວງຕາຍັງມືດບອດຢູ່?

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດເປີດໄຂດວງຕາຂອງລູກໃຫ້ເຫັນແຈ້ງວ່າ ພຣະອົງແມ່ນພຣະກຣິສໂຕຜູ້ມາໃນໂລກນີ້ເພື່ອຊ່ວຍລູກລແະທຸກຄົນໃຫ້ຣອດຈາກບາບອັນເປັນທີ່ມາຂອງຄວາມຕາຍ, ເພື່ອລູກຈະໄດ້ເຊື່ອໃນພຣະອົງແລະໄດ້ຮັບຄວາມຣອດຈາກພຣະອົງດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ